ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນແລະຄຸ້ມຄອງວິສາຫະກິດ

ເລກທີ 1129 /ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2013.

ເຖິງ:

- ຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດ (ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ)
- ຜູ້ລົງທຶນຕ່າງປະເທດ

ເລື່ອງ: ການຈັດຕັ້ງປະຕິບັດວັກສອງ ມາດຕາ 17 ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ

ອີງຕາມພື້ນຖານການແນະນຳຂອງກົມສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ) ຕາມບົດບັນທຶກກອງປະຊຸມ, ສະບັບເລກ 017/ທປດ, ລົງວັນທີ 11 ມີນາ 2013 (ລະບຸໃນ ຂໍ້ 2 ໜ້າ 4 ) ກ່ຽວກັບທຶນຂອງຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນກິດຈະການທົ່ວໄປ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ຊາບກ່ຽວກັບຄຳແນະນຳດັ່ງກ່າວ ແລະ ເພື່ອຈັດຕັ້ງປະຕິບັດເປັນເອກະພາບກັນ ດັ່ງນີ້:

"ການຈັດຕັ້ງປະຕິບັດ ມາດຕາທີ 17 ຂອງກົດໝາຍສົ່ງເສີມການລົງທຶນ ສະບັບປີ 2009 ທີ່ລະບຸວ່າ: " ຜູ້ລົງທຶນຕ່າງປະເທດໃນກິດຈະການທົ່ວໄປ ຕ້ອງມີທຶນທັງໝົດບໍ່ໃຫ້ຫລຸດໜຶ່ງຕື້ກີບ " ແມ່ນໃຫ້ເປັນເອກະພາບກັນ ຄື: ຜູ້ລົງທຶນ ຈະເປັນບຸກຄົນ ຫລື ນິຕິບຸກຄົນ ທີ່ມີຫລາຍຂາຮຸ້ນ ມາຮ່ວມທຸລະກິດສ້າງຕັ້ງບໍລິສັດໜຶ່ງ ແມ່ນຕ້ອງມີທຶນຈົດທະບຽນບໍ່ໃຫ້ຫລຸດໜຶ່ງຕື້ກີບ".

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ດຣ. ສິນພອງ ພຸຍພິນິດ

ບ່ອນສົ່ງ

- ຄະນະນຳກະຊວງ ເພື່ອຊາບ
- ບັນດາກົມ ເພື່ອຊາບ
- ກົມສົ່ງເສີມການລົງທຶນ ເພື່ອຊາບ

Scanned by CamScanner